**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ລັດຖະບານ** ເລກທີ............./ລບ

ນະຄອນຫຼວງວຽງຈັນ, ວັນທີ........................

(ຮ່າງ 14)

# ດຳລັດ

## ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງສປປລາວສະບັບເລກທີ69/ສພຊ,ລົງວັນທີ15ທັນວາ2015
- ອີງຕາມ ມະຕິກອງປະຊຸມລັດຖະບານປະຈຳເດືອນ…., ສະບັບເລກທີ ...../ລບ, ລົງວັນທີ ..........
- ອີງຕາມ ໜັງສືສະເໜີສະບັບເລກທີ ........../ ກປ, ລົງວັນທີ ................ ຂອງກະຊວງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

## ລັດຖະບານ ອອກດຳລັດ:

### ໝວດທີI

### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດມາດຕະຖານ ພົ້ນທຸກ, ມາດຕະຖານພັດທະນາ, ຫຼັກການ, ວິທີກາ ນ, ຂັ້ນຕອນໃນການ ຈັດຕັ້ງປະຕິບັດ, ອົງການຮັບຜິດຊອບ, ການສະ ເໜີ ແລະ ຮັບຮອງເອົາ ຄອບຄົວ , ບ້ານ, ເມືອງພົ້ນທຸກ, ພັດທະນາ ແລະ ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດເພື່ອໃຫ້ບັນດາຂະແໜງການ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງນຳໄປຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນທົ່ວປະເທດ ແລະ ໃຫ້ບັນລຸຄາດໝາຍແກ້ໄຂຄວາມທຸກຍາກ, ສ້າງບ້ານພັດທະນາ ທີ່ ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີຄັ້ງທີ VIII ກຳນົດໄວ້ໃຫ້ປາກົດຜົນເປັນຈິງ.

**ມາດຕາ 2 ຄວາມໝາຍ ຄວາມສຳຄັນ**

ການສ້າງຄອບຄົວ, ບ້ານ, ເມືອງ ພົ້ນທຸກ ແລະ ພັດທະນາ,ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດແມ່ນຂະບວນວິວັດແຫ່ງການປັບປຸງ ກໍ່ສ້າງຫົວໜ່ວຍພື້ນຖານຂອງລະບອບປະຊາທິປະໄຕປະຊາຊົນໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ມີຄວາມໝັ້ນຄົງຍືນຍົງໂດຍມີສ່ວນຮ່ວມຂອງທຸກຂະແໜງການແຕ່ສູນກາງລົງຮອດທ້ອງຖິ່ນຮາກຖານ ແລະ ເຂົ້າຮ່ວມຢ່າງເປັນເຈົ້າການຂອງປະຊາຊົນ.

ການສ້າງຄອບຄົວ , ບ້ານ, ເມືອງພົ້ນທຸກ ແລະ ພັດທະນາ,ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດແມ່ນໜ້າທີ່,ຄວາມຮັບຜິດຊອບໂດຍກົງ ຂອງ ບັນດາຂະແໜງການຂັ້ນສູນກາງ , ອົງການປົກຄອງທ້ອງຖິ່ນຮາກຖານ, ຖືເປັນໜ້າທີ່ຈຸດສຸມຂອງຂະບວນການແຂ່ງຂັນຮັກຊາດແລະ ພັດທະນາໃນແຕ່ລະໄລຍະ.

**ມາດຕາ 3 ອະທິບາຍ ຄຳສັບ ແລະ ສຳນວນ**

ຄຳສັບ ແລະ ສຳນວນ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

**ພົ້ນທຸກ** ໝາຍເຖິງ ການບັນລຸປັດໄຈພື້ນຖານໃນການດຳລົງຊີວິດປະຈຳວັນຄື: ມີອາຫານການກິນ ທີ່ສາມາດຕອບສະໜອງພະລັງງານ 2,100 ກິໂລກາລໍລີຕໍ່ຄົນຕໍ່ ມື້ ຂຶ້ນໄປ, ມີເຄື່ອງນຸ່ງຫົ່ມ, ມີທີ່ຢູ່ອາໄສຖາວອນ, ສາມາດໃຊ້ຈ່າຍ ປິ່ນປົວເວລາເຈັບເປັນ ແລະການສຶກສາຂັ້ນ ພື້ນຖານ,ສາມາດເຂົ້າເຖິງຕາໜ່າງການບໍລິການສາທາລະນະຂັ້ນພື້ນຖານ.

**ພັດທະນາ** ໝາຍເຖິງໝາກຜົນຂອງຂະບວນວິວັດແຫ່ງການສ້າງສາທີ່ບັນລຸມາດຕະຖານ, ເງື່ອນໄຂໃນການພັດທະນາເຊັ່ນ: ລະບົບການເມືອງ-ການປົກຄອງມີຄວາມໜັກແໜ້ນເຂັ້ມແຂງ;ສັງຄົມມີຄວາມເປັນລະບຽບຮຽບຮ້ອຍແລະມີຄວາມສະຫງົບໜັກແໜ້ນ ,ປະຊາຊົນມີຄວາມສາມັກຄີ ປອງດອງ , ມີຄວາມຕື່ນຕົວທາງດ້ານການເມືອງ, ມີສະຕິເຄົາລົບແລະປະຕິບັດລະບຽບກົດໝາຍ, ສາມາດເຂົ້າເຖິງການບໍລິການສາທາລະນະຂັ້ນພື້ນຖານ ແລະ ພົ້ນທຸກ; ພື້ນຖານດ້ານເສດຖະກິດ -ສັງຄົມມີການຂະຫຍາຍຕົວຢ່າງຕໍ່ເນື່ອງໜັກແໜ້ນ; ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຮັບການ ຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຕາມທິດສີຂຽວ ແລະຍືນຍົງ.

**ບໍລິການສາທາລະນະ** ໝາຍເຖິງ ການສະໜອງດ້ານ ສາທາລະນະ ປະໂຫຍດ ທີ່ອີງການລັດ ຫຼື ພາກສ່ວນທຸລະກິດ ແລະ ອີງການສັງຄົມຕ່າງໆ ໃຫ້ແກ່ປະຊາຊົນ ເຊັ່ນ: ດ້ານສາທາລະນະ ສຸກ, ການສຶກສາ, ການຄົມມະນາຄົມ-ຂົນສົ່ງ, ໄຟຟ້າ, ນ້ຳສະອາດ, ພາຫະນະ, ອຸປະກອນ, ການຊື້ຂາຍ, ຂໍ້ມູນຂ່າວສານ, ຄວາມສະຫງົບປອດໄພ, ການສົງເຄາະຊ່ວຍເຫຼືອ ແລະ ອື່ນໆ.

## ໝວດທີII

## ການກຳນົດມາດຕະຖານພົ້ນທຸກ

**ມາດຕາ 4 ມາດຕະຖານຄອບຄົວພົ້ນທຸກ**

ຄອບຄົວ ພົ້ນທຸກແມ່ນຄອບຄົວທີ່ມີເງື່ອນໄຂຂັ້ນພື້ນຖານ ດັ່ງນີ້:

1. ມີທີ່ຢູ່ອາໄສແໜ້ນໜາ ປອດໄພ.
2. ມີຊັບສິນແລະເຄື່ອງໃຊ້ຕ່າງໆ ທີ່ຈຳເປັນສຳລັບການດຳລົງຊີວິດ ແລະ ທຳມາຫາກິນ.
3. ມີແຮງງານ ແລະ ມີອາຊີບ ຫຼືແຫຼ່ງລາຍຮັບໝັ້ນຄົງ.
4. ສະມາຊິກໃນຄອບຄົວໃນເກນອາຍຸໄດ້ ຮັບການສຶກສາໃນລະດັບມັດທະຍົມຕົ້ນ.
5. ຊົມໃຊ້ນ້ຳສະອາດ ແລະພະລັງງານໝັ້ນຄົງ.
6. ເຂົ້າເຖິງການບໍລິການສາທາລະນະຂັ້ນພື້ນຖານ.

ຄອບຄົວທີ່ບໍ່ບັນລຸ 6 ເງື່ອນໄຂ ເທິງນີ້ ຖືວ່າເປັນຄອບຄົວທຸກ.

**ມາດຕາ 5 ມາດຕະຖານບ້ານພົ້ນທຸກ**

ບ້ານພົ້ນທຸກແມ່ນບ້ານທີ່ມີເງື່ອນໄຂຫຼືເຂົ້າເຖິງການບໍລິການສາທາລະນະຂັ້ນພື້ນຖານ ດັ່ງນີ້:

1. ໂຮງຮຽນປະຖົມຫຼືໂຮງຮຽນມັດທະຍົມຕອນຕົ້ນ.
2. ສຸກສາລາ ຫຼື ການບໍລິການສຸຂະພາບຂັ້ນພື້ນຖານ.
3. ແຫຼ່ງນ້ຳສະອາດ.

4. ເສັ້ນທາງຄົມມະນາຄົມ ທີ່ສາມາດທຽວໄດ້ຕະຫຼອດປີ.
5. ການບໍລິການດ້ານໂທລະຄົມມະນາຄົມ-ຂົນສົ່ງ.
6. ການຊື້-ຂາຍ ແລະ ແລກປ່ຽນສິນຄ້າ ຫຼື ຕະຫຼາດ.
7. ຕາຂ່າຍໄຟຟ້າໃນລະບົບ.
8. ມີຄອບຄົວພົ້ນທຸກກວມ 70% ຂຶ້ນໄປຂອງຈຳນວນຄອບຄົວທັງໝົດພາຍໃນບ້ານ.

ບ້ານທີ່ບໍ່ບັນລຸ 8 ເງື່ອນໄຂ ເທິງນີ້ ຖືວ່າເປັນບ້ານທຸກ.

**ມາດຕາ 6 ມາດຕະຖານ ເມືອງພົ້ນທຸກ**

ເມືອງພົ້ນທຸກ ແມ່ນ ເມືອງທີ່ມີເງື່ອນໄຂຂັ້ນພື້ນຖານ ດັ່ງນີ້:

1. ໂຮງຮຽນມັດທະຍົມສົມບູນ.
2. ໂຮງໝໍເມືອງຫຼື ເຂົ້າເຖິງການບໍລິການຂອງໂຮງໝໍແຂວງ ຫຼື ສູນກາງ.
3. ເທດສະບານເມືອງ ໄດ້ຊົມໃຊ້ນໍ້າປະປາຊຸມຊົນ ຫຼື ລະບົບນໍ້າປະປາ.
4. ເທດສະບານເມືອງ ໄດ້ຈັດຕັ້ງປະຕິບັດຕາມແຜນຜັງ.
5. ເສັ້ນທາງເຂົ້າເຖິງທຽວໄດ້ຕະຫຼອດປີແລະເຊື່ອມຈອດກັບທຸກໆບ້ານພາຍໃນເມືອງ.
6. ລະບົບໂທລະຄົມມະນາຄົມ-ຂົນສົ່ງ.
7. ຕະຫຼາດຊື້-ຂາຍສິນຄ້າ ເປັນປົກກະຕິ.
8. ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຮັບການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຢ່າງມີປະສິດທິຜົນ.
9. ບ້ານພົ້ນທຸກຫຼາຍກວ່າ 70% ຂຶ້ນໄປ ຂອງຈຳນວນບ້ານທັງໝົດພາຍໃນເມືອງ.

ເມືອງທີ່ບໍ່ບັນລຸ 9 ເງື່ອນໄຂ ເທິງນີ້ ຖືວ່າເປັນເມືອງທຸກ.

## ໝວດທີIII

## ມາດຕະຖານພັດທະນາ

**ມາດຕາ 7 ມາດຕະຖານຄອບຄົວພັດທະນາ**

ຄອບຄົວພັດທະນາ ແມ່ນຄອບຄົວທີ່ບັນລຸເງື່ອນໄຂດັ່ງນີ້:

1. ມີຄວາມສາມັກຄີແລະມີຄວາມຕື່ນຕົວເປັນເຈົ້າໃນການສ້າງສາພັດທະນາ.
2. ບັນລຸເງື່ອນໄຂດ້ານວັດທະນະທຳ-ສັງຄົມທີ່ບັນດາຂະແໜງການວາງອອກ.
3. ຕື່ນຕົວເປັນເຈົ້າການ ເຂົ້າຮ່ວມແລະ ປະກອບສ່ວນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
4. ເປັນເຈົ້າການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງມີປະສິດທິຜົນແລະຍືນຍົງ.
5. ພົ້ນທຸກ ແລະ ມີແຫຼ່ງລາຍຮັບໝັ້ນຄົງ.

**ມາດຕາ 8 ມາດຕະຖານບ້ານພັດທະນາ**

ບ້ານພັດທະນາ ແມ່ນ ບ້ານທີ່ບັນລຸເງື່ອນໄຂ ດັ່ງນີ້:

1. ປະຊາຊົນພາຍໃນບ້ານ ມີຄວາມສາມັກຄີປອງດອງ, ຕື່ນຕົວເປັນເຈົ້າການໃນການສ້າງສາພັດທະນາ.
2. ລະບົບການເມືອງ-ການປົກຄອງຂອງບ້ານມີຄວາມໜັກແໜ້ນ ເຂັ້ມແຂງ.

3. ບັນລຸເງື່ອນໄຂດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
4. ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.
5. ມີແຜນຜັງບ້ານທີ່ດີ ແລະ ມີການຈັດຕັ້ງປະຕິບັດຕາມແຜນຜັງ.
6. ມີແຜນຜັງການນຳໃຊ້ທີ່ດິນ 3 ປະເພດ (ດິນປຸກສ້າງ, ດິນທຳການຜະລິດ ແລະ ດິນສາທາລະນະເພື່ອຮັບໃຊ້ແກ່ການພັດທະນາ-ການບໍລິການ)
7. ມີເສັ້ນທາງຄົມມະນາຄົມເຂົ້າເຖິງ ທງອໄດ້ຕະຫຼອດປີຢ່າງສະດວກ.
8. ປະຊາຊົນພາຍໃນບ້ານ ໄດ້ເຂົ້າເຖິງການບໍລິການສາທາລະນະຢ່າງສະດວກ.
9. ບັນລຸເງື່ອນໄຂດ້ານວັດທະນະທຳ-ສັງຄົມທີ່ບັນດາຂະແໜງການວາງອອກ.
10. ມີການຄຸ້ມຄອງ, ປົກປັກຮັກສາແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງມີປະສິດທິຜົນແລະຍືນຍົງ.
11. ເປັນບ້ານພົ້ນທຸກແລະ ມີຄອບຄົວພັດທະນາ 85% ຂຶ້ນໄປ.

**ມາດຕາ 9 ມາດຕະຖານບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ**

ບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ແມ່ນບ້ານທີ່ບັນລຸເງື່ອນໄຂ ດັ່ງນີ້:

1. ເປັນບ້ານພັດທະນາ ທີ່ຕັ້ງຢູ່ຊົນນະບົດ.
2. ເປັນໃຈກາງທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
3. ມີເສັ້ນທາງຄົມມະນາຄົມເຊື່ອມຈອດ ບັນດາບ້ານອ້ອມຂ້າງ ແລະເທດສະບານເມືອງ ຢ່າງສະດວກ.
4. ມີພົນລະເມືອງແຕ່ໜຶ່ງພັນຄົນຂຶ້ນໄປ(ສຳລັບບ້ານຢູ່ເຂດຊົນນະບົດພູດອຍ),ສາມພັນຄົນຂຶ້ນໄປ (ສໍ າລັບບ້ານຢູ່ເຂດຊົນນະບົດທົ່ງພຽງ).

**ມາດຕາ 10 ມາດຕະຖານເມືອງພັດທະນາ**

ເມືອງພັດທະນາແມ່ນເມືອງທີ່ມີ ແລະ ບັນລຸເງື່ອນໄຂ ດັ່ງນີ້:

1. ລະບົບການເມືອງ-ການປົກຄອງໜັກແໜ້ນ ເຂັ້ມແຂງ.
2. ມີພື້ນຖານໂຄງລ່າງດ້ານການຜະລິດ ແລະ ການບໍລິການທີ່ຖາວອນ
3. ແຜນຜັງເມືອງດີ, ປະຕິບັດຖືກຕ້ອງຕາມແຜນຜັງ ແລະ ມີຄວາມສະອາດງາມຕາ.
4. ເສດຖະກິດມີການຂະຫຍາຍຕົວ ໜັກແໜ້ນ,ຕໍ່ເນື່ອງ, ມີຄວາມເຂັ້ມແຂງດ້ານງົບປະມານ-ການເງິນ.
5. ພາຍໃນເທດສະບານເມືອງ ມີລະບົບເສັ້ນທາງສະດວກດີ, ເຊື່ອມຈອດກັບເທດສະບານແຂວງ ແລະທຸກໆບ້ານພາຍໃນເມືອງ.
6. ບັນລຸເງື່ອນໄຂດ້ານວັດທະນະທຳ-ສັງຄົມ ທີ່ບັນດາຂະແໜງການວາງອອກ.
7. ການບໍລິການສາທາລະນະທົ່ວເຖິງ ແລະ ສະດວກ.
8. ມີຄວາມເຂັ້ມແຂງທາງດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
9. ຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມທິດສີຂຽວແລະຍືນຍົງ.
10. ບ້ານພັດທະນາກວມ 85% ຂຶ້ນໄປ.

## ໝວດທີIV
## ໜ້າທີ່ ແລະ ຄວາມຮັບຜິດຊອບ
## ຂອງອົງການຂັ້ນສູນກາງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ

**ມາດຕາ 11ໜ້າທີ່ແລະຄວາມຮັບຜິດຊອບຂອງອົງການຂັ້ນສູນກາງ**

11.1 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ກະຊວງກະສິກາ, ປ່າໄມ້ ແລະ ພັດທະນາຊົນນະບົດ:

1. ຈັດຕັ້ງເຜີຍແຜ່ ເຊື່ອມຊຶມ ດຳລັດສະບັບນີ້ໃຫ້ບັນດາກະຊວງ, ອົງການຈັດຕັ້ງ ຂັ້ນສູນກາງ, ທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນ ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.
2. ຄົ້ນຄວ້າ ອອກບົດແນະນຳ,ຄູ່ມື ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃຫ້ແກ່ບັນດາຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນນຳໄປຈັດຕັ້ງປະຕິບັດ ໃຫ້ມີຄວາມເປັນເອກະພາບກັນ ໃນທົ່ວປະເທດ.
3. ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສັງລວມແຜນການສ້າງຄອບຄົວ, ບ້ານ, ເມືອງ ພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ແລະ ຊຸກຍູ້ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ແຕ່ລະໄລຍະ.
4. ເປັນເຈົ້າການປະສານສົມທົບຂະແໜງການຕ່າງໆ ຈັດຕັ້ງການກວດກາ-ປະເມີນຜົນ ການພົ້ນທຸກ ແລະ ພັດທະນາແລະ ສະຫຼຸບ ສັງລວມ ລາຍງານ ຜົນຈັດຕັ້ງການກວດກາ-ປະເມີນໃຫ້ລັດຖະບານພິຈາລະນາ ຮັບຮອງ ແລະ ປະກາດໃຊ້ ແຕ່ລະໄລຍະ.
5. ສ້າງເປັນຖານຂໍ້ມູນ, ຈັດຕັ້ງເຜີຍແຜ່ ໂຄສະນາ ຜົນການກວດກາ-ປະເມີນ ການພົ້ນທຸກ ແລະ ພັດທະນາ ໃຫ້ພາຍໃນ ແລະ ຕ່າງປະເທດ.

11.2 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ບັນດາກະຊວງ ແລະ ອົງການຂັ້ນສູນກາງ:

1. ຈັດຕັ້ງເຜີຍແຜ່ ເຊື່ອມຊຶມ ດຳລັດສະບັບນີ້ໃຫ້ ພະນັກງານລັດຖະກອນພາຍໃຕ້ຄວາມຮັບຜິດຊອບຂອງຕົນ ແຕ່ສູນກາງລົງຮອດທ້ອງຖິ່ນ ໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.
2. ຄົ້ນຄວ້າ,ກຳນົດມາດຕະຖານແລະເງື່ອນໄຂພົ້ນທຸກແລະພັດທະນາ ພ້ອມທັງ ອອກຄຳແນະນຳ, ຝຶກອົບຮົມ ສ້າງຄວາມເຂັ້ມແຂງ ໃຫ້ພະນັກງານວິຊາການຂອງຕົນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງກັບຂະແໜງການຕົນ;
3. ສ້າງແຜນການ, ໂຄງການ ແລະ ແຜນງົບປະມານ ໃນການສ້າງຄອບຄົວ, ບ້ານ, ເມືອງພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດຕາມມາດຕະຖານ ແລະ ເງື່ອນໄຂ ທີ່ກ່ຽວຂ້ອງກັບຂະແໜງການຕົນ ແລະ ຈັດຕັ້ງປະຕິບັດແຜນດັ່ງກ່າວໃນແຕ່ລະໄລຍະ.
4. ກວດກາ-ປະເມີນ ຄອບຄົວ, ບ້ານ, ເມືອງ ພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ຕາມມາດຕະຖານ ທີ່ກ່ຽວຂ້ອງກັບຂະແໜງການຕົນ ພ້ອມທັງ ຄົ້ນຄວ້າ ວິໄຈ ແລະ ຢັ້ງຢືນ-ຮັບຮອງ ຜົນການກວດກາ-ປະເມີນ ແລະ ສະຫຼຸບລາຍງານໃຫ້ ກະຊວງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເພື່ອສັງລວມລາຍງານ ໃຫ້ລັດຖະບານ.

**ມາດຕາ 12 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນ**

12.1 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງ ຂະແໜງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຂັ້ນແຂວງ ແລະ ເມືອງ.

1. ຈັດຕັ້ງ ເຜີຍແຜ່ ເຊື່ອມຊຶມ ດຳລັດ, ຄຳແນະນຳ, ຄູ່ມື ການຈັດຕັ້ງປະຕິບັດດຳລັດ ສະບັບນີ້ໃຫ້ບັນດາຂະແໜງການອ້ອມຂ້າງແຂວງ, ເມືອງ ແລະ ບ້ານ ໃຫ້ຮັບຮູ້ ແລະ ເຂົ້າໃຈ ຢ່າງທົ່ວເຖິງ.
2. ປະສານສົມທົບກັບບັນດາຂະແໜງການອ້ອມຂ້າງແຂວງ, ເມືອງ ແລະ ອົງການປົກຄອງບ້ານກຳນົດ ແລະ ຈັດຕັ້ງປະຕິບັດແຜນການສ້າງຄອບຄົວ, ບ້ານ, ເມືອງພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ແລະ ຊຸກຍູ້ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດຕົວຈິງ.

3. ເປັນເຈົ້າການປະສານສົມທົບຂະແໜງການອ້ອມຂ້າງແຂວງ, ເມືອງ ແລະ ອົງການປົກຄອງບ້ານ ດໍາເນີນການກວດກາ-ປະເມີນ ຄອບຄົວ, ບ້ານ, ເມືອງ ພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດໃນແຕ່ລະປີ; ຄົ້ນຄວ້າ-ວິໄຈ ແລະ ສະຫຼຸບ ສັງລວມ ລາຍງານ ຜົນຈັດຕັ້ງການກວດກາ-ປະເມີນ ໃຫ້ຄະນະນໍາເມືອງ, ແຂວງ ພິຈາລະນາ ຮັບຮອງ ແລະ ອອກໃບຢັ້ງຢືນຄອບຄົວ, ບ້ານ ພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ແລ້ວສັງລວມລາຍງານກະຊວງກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ.
4. ສ້າງເປັນຖານຂໍ້ມູນ ຜົນການກວດກາ-ປະເມີນ ຄອບຄົວ, ບ້ານ, ເມືອງ ພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ໃນແຕ່ລະປີ ແລະ ເຜີຍແຜ່ໃຫ້ບັນດາຂະແໜງການ, ອົງການປົກຄອງ ແຕ່ລະຂັ້ນ, ອົງການຈັດຕັ້ງສັງຄົມ ແລະ ປະຊາຊົນ ໃນທົ່ວແຂວງ ຮັບຮູ້ຢ່າງທົ່ວເຖິງ.

12.2 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງບັນດາຂະແໜງການຕ່າງໆ ຂັ້ນແຂວງ ແລະ ເມືອງ

1. ຈັດຕັ້ງ ເຜີຍແຜ່ ເຊື່ອມຊຶມ ດໍາລັດ, ຄໍາແນະນໍາ, ຄູ່ມື ການຈັດຕັ້ງປະຕິບັດດໍາລັດສະບັບນີ້, ຄໍາແນະນໍາຂອງຂະແໜງການສາຍຕັ້ງຂອງຕົນ ແລະ ຝຶກອົບຮົມ ໃຫ້ພະນັກງານ-ລັດຖະກອນ ຮັບຮູ້ ແລະ ເຂົ້າໃຈ ຢ່າງທົ່ວເຖິງ.
2. ສ້າງແຜນການ, ໂຄງການ ແລະ ແຜນງົບປະມານ ໃນການສ້າງຄອບຄົວ, ບ້ານ, ເມືອງພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ຕາມມາດຕະຖານທີ່ກ່ຽວຂ້ອງກັບຂະແໜງການຕົນ ແລະ ຊຸກຍູ້ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດຕົວຈິງ.
3. ຈັດຕັ້ງ ກວດກາ-ປະເມີນ ຄອບຄົວ, ບ້ານ, ເມືອງ ພົ້ນທຸກ ແລະ ພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ຕາມມາດຕະຖານ ທີ່ກ່ຽວຂ້ອງກັບຂະແໜງການຕົນ, ຄົ້ນຄວ້າ-ວິໄຈ ແລະ ສະຫຼຸບ ສັງລວມ ລາຍງານ ຜົນຈັດຕັ້ງການກວດກາ-ປະເມີນ ໃຫ້ຄະນະນໍາເມືອງ, ແຂວງ ພິຈາລະນາ ຮັບຮອງ - ຢັ້ງຢືນ ແລະ ສັງລວມລາຍງານ ພະແນກ, ຫ້ອງການກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ຂະແໜງການສາຍຕັ້ງຂອງຕົນ.

## ໝວດທີV

## ການກວດກາ-ປະເມີນ, ການຢັ້ງຢືນ-ຮັບຮອງແລະການປັບປຸງ ແລະ ການປ່ຽນແປງ

### ມາດຕາ 13 ການກວດກາ-ປະເມີນ

1. ການກວດກາ-ປະເມີນ ການພົ້ນທຸກ ແລະ ພັດທະນາທົ່ວປະເທດ ດໍາເນີນເປັນ 3 ໄລຍະ ຄື: ໄລຍະຕົ້ນ, ໄລຍະກາງ ແລະ ໄລຍະທ້າຍ ຂອງການຈັດຕັ້ງປະຕິບັດ ແຜນການພັດທະນາເສດຖະກິດ -ສັງຄົມ 5 ປີ ແຕ່ລະຄັ້ງ.
2. ການກວດກາ-ປະເມີນຄອບຄົວ,ບ້ານ,ເມືອງພົ້ນທຸກແລະພັດທະນາ, ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດຂັ້ນທ້ອງຖິ່ນ ດໍາເນີນເປັນ ແຕ່ລະປີໃຫ້ສໍາເລັດໃນເດືອນມິຖຸນາ ແລະ ສະຫລຸບສັງລວມລາຍງານໃຫ້ກະຊວງກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ໃນເດືອນກັນຍາ ເພື່ອລາຍງານລັດຖະບານ.

### ມາດຕາ 14 ການຢັ້ງຢືນ ແລະ ຮັບຮອງ

1. ການຢັ້ງຢືນ-ຮັບຮອງ ຄອບຄົວພົ້ນທຸກແລະຄອບຄົວພັດທະນາ ແມ່ນນາຍບ້ານ ເປັນຜູ້ສະເໜີຕໍ່ເຈົ້າເມືອງ ແລະ ເຈົ້າເມືອງເປັນຜູ້ອອກໃບຢັ້ງຢືນແລະຮັບຮອງ.
2. ການຢັ້ງຢືນ -ຮັບຮອງ ບ້ານພົ້ນ ທຸກ, ບ້ານພັດທະນາແລະບ້ານໃຫຍ່ຕົວເມືອງໃນຊົນນະບົດແມ່ນ ເຈົ້າເມືອງສະເໜີ ຕໍ່ ເຈົ້າແຂວງແລະ ເຈົ້າແຂວງ ອອກໃບຢັ້ງຢືນແລະຮັບຮອງ.

3. ການຍັ້ງຢື ນ-ຮັບຮອງເມືອງພົ້ນທຸກແລະເມືອງພັດທະນາແມ່ນ ເຈົ້າແຂວງສະເໜີຕໍ່ນາຍົກລັດຖະມົນຕີ ແລະນາຍົກລັດຖະມົນຕີ ເປັນຜູ້ອອກຂໍ້ຕົກລົງຍັ້ງຢືນ ແລະຮັບຮອງ.

**ມາດຕາ 15 ການປັບປຸງ ແລະ ການປ່ຽນແປງມາດຕະຖານ**

ມາດຕະຖານພົ້ນທຸກແລະພັດທະນາຈະ ມີການປັບປຸງ ແລະ ປ່ຽນແປງໄປຕາມການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ

ກະຊວງກະສິກຳ,ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນໃຈກາງ ປະສານສົມທົບກັບບັນດາກະຊວງ ແລະອົງການທີ່ກ່ຽວຂ້ອງຄົ້ນຄວ້າ ປັບປຸງ ແລ້ວນຳສະເໜີລັດຖະບານພິຈາລະນາ.

## ໝວດທີVI

## ບົດບັນຍັດສຸດທ້າຍ

**ມາດຕາ 16 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງກະສິກຳ ,ປ່າໄມ້ ແລະພັດທະນາຊົນນະບົດປະສານສົມທົບກັບບັນດາກະຊວງອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ສັງລວມລາຍງານລັດຖະບານໃນແຕ່ລະໄລຍະ.

ມອບໃຫ້ບັນດາກະຊວງ,ອົງການທຽບເທົ່າຂັ້ນສູນກາງ,ນະຄອນຫຼວງວຽງຈັນແລະບັນດາແຂວງທົ່ວປະເທດ ເປັນຜູ້ຈັດຕັ້ງປະຕິບັດຕົວຈິງ ຕາມພາລະບົດບາດຂອງຕົນ ແລະ ລາຍງານຜົນການຈັດຕັ້ງປະຕິບັດໃຫ້ກະຊວງກະສິກຳ,ປ່າໄມ້ ແລະພັດທະນາຊົນນະບົດ ເພື່ອສັງລວມລາຍງານລັດຖະບານ.

ບັນດາກະຊວງ ,ອົງການທຽບເທົ່າຂັ້ນສູນກາງ ແລະ ທ້ອງຖິ່ນ ,ນະຄອນຫຼວງວຽງຈັນແລະບັນດາແຂວງທົ່ວປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 17 ຜົນ ສັກສິດ**

ດຳລັດ ສະບັບ ນີ້ປ່ຽນແທນ ດຳລັດເລກທີ 309 / ນຍ, ລົງວັນທີ 14 ພະຈິກ 2013ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ; ຂໍ້ກຳນົດ, ບົດບັນຍັດໃດ ຫາກຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະບານ ແຫ່ງ ສປປ ລາວ**